**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 3 ທັນວາ 2006 ( 12-3-2006 )**

---

# <u>ຄວາມເຊື່ອທີ່ໃຊ້ການໄດ້:</u>

# ເຮັບເຣີ 11:1-2,5-7,32-38;12:1-2

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເຮັບເຣີ 11:1-2,5-7,32-38;12:1-2

**<u>ຄວາມຈິງໃນພຣະຄັມພີ:</u>** ຄວາມເຊື່ອເຮັດໃຫ້ພຣະເຈົ້າພໍພຣະທັຍ ແລະຄວາມເຊື່ອນັ້ນເອງເຮັດໃຫ້ເຫັນຄວາມອົດທົນດົນນານອັນໝັ້ນຄົງຢູ່ໃນການເຊື່ອຟັງ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍທ່ານໃຫ້ມີປະສົບການຊີວິດ-ຕໍ່ການສັບປ່ຽນພອນສວັນຂອງພຣະເຈົ້າໂດຍ:

- ການເບິ່ງເຫັນຄວາມສຳຄັນຕໍ່ການມີສ່ວນໃນການຝຶກຫັດຄວາມເຊື່ອທີ່ແທ້ຈິງແລະ
- ການຕັດສິນໃຈເດັດຂາດໃນການສະແດງອອກເຖິງຄວາມເຊື່ອໃນພຣະເຈົ້າຂອງທ່ານແຕ່ລະມື້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດການຮຽນ, ເພື່ອຜູ້ຂາດການຮຽນໃນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນຳ:</u>

1). ຄວາມເຊື່ອແມ່ນສັຈທັນທີ່ມາຈາກພຣະເຈົ້າ

2). ສະນັ້ນ,ຈຶ່ງເປັນການສົມຄວນທີ່ພວກເຮົາຈະຕ້ອງຕອບສນອງພຣະເຈົ້າ

3). ພຣະອົງເອງທີ່ເຮັດໃຫ້ຜູ້ທີ່ໄດ້ຍິນໄດ້ຟັງພຣະຄຳຂອງພຣະອົງເກີດມີຄວາມເຊື່ອໃນພຣະຄຣິດ

4). ມື້ນີ້ພວກເຮົາຈະສຶກສາເຣື່ອງຄວາມເຊື່ອຊຶ່ງເປັນຂອງປະທານໃນການປ່ຽນແປງຊີວິດ

**ຄຳຖາມ:** 1) ໃນຊີວິດຂອງທ່ານແມ່ນສິ່ງໃດທີ່ຊ່ອຍໃຫ້ຈະເຣີນ ແລະສະແດງອອກເຖິງຄວາມເຊື່ອອັນແທ້ຈິງ ?

2). ທ່ານຈະເຮັດແນວໃດເພື່ອໃຫ້ຄວາມເຊື່ອຂອງທ່ານໃຊ້ການໄດ້?

## 1. **ທັມມະຊາດຂອງຄວາມເຊື່ອ:** ( ເຮັບເຣີ 11:1-2 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຣີ 11:1-2 *

2) **ອະທິບາຍ:** ຜູ້ຂຽນພຣະທັມຕອນນີ້ໄດ້ແນະນໍາໃຫ້ເຮົາຍຶດໝັ້ນໃນຄວາມເຊື່ອໃນພຣະເຈົ້າ ແລະເຮັດໃນສິ່ງທີ່ຖືກຕ້ອງ, ເຖິງແມ່ນວ່າພວກເຮົາບໍ່ເຫັນພຣະເຈົ້າດ້ວຍຕາ, ແຕ່ເຮົາກໍຮູ້ວ່າຄໍາສັນຍາຂອງພຣະອົງເຮັດໃຫ້ເຫັນເປັນຈິງ.

**ຖາມ:** 1). ແມ່ນຫຍັງເປັນຂອງຂວັນຂອງຄວາມເຊື່ອທີ່ບໍ່ເຫັນກັບຕາ?

2). ເຮັດແນວໃດຈິ່ງຈະໃຫ້ສິ່ງທີ່ບໍ່ເຫັນກັບຕາກາຍມາເປັນຄວາມເຊື່ອທີ່ເຫັນໄດ້?

**ອະທິບາຍ:** ວັຈນານຸກົມພຣະຄັມພີໄດ້ອະທິບາຍຄວາມເຊື່ອຄວາມໄວ້ວາງໃຈໃນພຣະເຈົ້າຂອງຜູ້ທີ່ມີຄວາມສັມພັນກັບພຣະເຈົ້າ ແລະການທໍາງານຂອງພຣະອົງ.

ມີຜູ້ທີ່ເຊື່ອເປັນພຍານເຣື່ອງການພິພາກສາ, ການເປີດເຜີຍຂອງພຣະເຈົ້າທີ່ທໍາງານໃນການດໍາເນີນຊີວິດຂອງເຂົາ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ເຮັບເຣີ 11:1-2

1) ພວກເຮົາຈະຮູ້ໄດ້ຢ່າງໃດ ວ່າບາງສິ່ງທີ່ເຮົາບໍ່ເຫັນກັບຕາເປັນຄວາມຈິງ ທັງໆທີ່ບໍ່ເຫັນ ແຕະຕ້ອງບໍ່ໄດ້, ແລະອື່ນ ໆ?

2) ທ່ານຈະສາມາດບັນລະຍາຍເຖິງຄວາມຈິງຂອງທັສນະຄໍາສອນທີ່ໃຫ້ສະຕິປັນຍາເຂົ້າມາໃນຊີວິດຂອງທ່ານຢ່າງໃດໄດ້?

3) ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງໂດຍທາງຄວາມເຊື່ອຢ່າງໃດ?

4). ທ່ານສາມາດສະແດງຄວາມເຊື່ອຢ່າງເຕັມປ່ຽມຂອງທ່ານຕໍ່ພຣະເຈົ້າຢ່າງໃດແດ່?

5). ໃນການດໍາເນີນຊີວິດຂອງທ່ານປະຈຸບັນ ທ່ານໄດ້ເຮັດສິ່ງໃດແດ່ທີ່ສະແດງເຖິງການໄວ້ວາງໃຈໃນພຣະເຈົ້າ?

## 2. **ຕົວຢ່າງຕ່າງ ໆ ຂອງຄວາມເຊື່ອ:** ( ເຮັບເຣີ 11:5-7,32-38 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ເຮັບເຣີ 11:5-7,32-38

2) ໃຫ້ຍົກເອົາປໂຍກນຶ່ງຂື້ນມາເປັນຕົວຢ່າງໃນພຣະຄໍາທີ່ອ່ານມານັ້ນວ່າ ມີຫຍັງເກີດຂື້ນກັບລາວເພາະຄວາມເຊື່ອນີ້.

3) ຈົ່ງກັບໄປເບິ່ງບົດທີ5:5-7 ວ່າມີຊື່ໃຜທີ່ປາກົດຢູ່ໃນນັ້ນວ່າ ການທໍາງານຂອງລາວໄດ້ເຮັດໃຫ້ບາງສິ່ງ ບາງຢ່າງເກີດຂື້ນໃນຊີວິດຂອງລາວ ແລະພວກເຮົາຄວນຈະຮຽນແບບຢ່າງຈາກລາວ.

**ຄໍາຖາມ:** 1). ໃນເຮັບເຣີບົດທີ 11ທ່ານມີພຶດຕິການຢ່າງໃດທີ່ບົ່ງບອກວ່າທ່ານໄດ້ມີຄວາມເຊື່ອໃນພຣະເຈົ້າ?

2). ທ່ານຈະເຮັດວິທີໃດຕໍ່ ຄວາມເຊື່ອໄວ້ວາງໃຈໃຫ້ມັນໜັກແໜ້ນກວ່າຄໍາວ່າເຊື່ອລ້າ ໆ ເພື່ອໃຫ້ມີຄວາມສັມພັນກັບພຣະເຈົ້າສືບຕໍ່ໄປ?

3). ເພາະຄວາມສັມພັນຂອງທ່ານກັບພຣະເຈົ້າ ທ່ານຄວນຈະເຮັດວິທີໃດທີ່ສະແດງອອກເຖິງຄວາມເຊື່ອໄວ້ວາງໃຈຂອງທ່ານທີ່ມີຕໍ່ພຣະເຈົ້າ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ເຮັບເຣີ 11:5-7,32-38

1. ຈາກພຣະຄໍາເຫລົ່ານີ້ ໃນສ່ວນຕົວຂອງທ່ານ ທ່ານຄິດວ່າຢ່າງໃດໃນຄວາມເຊື່ອພຣະເຈົ້າຂອງລາວ?
2. ໃນຊີວິດຂອງທ່ານ ທ່ານເຫັນຜູ້ໃດທີ່ມີຄວາມເຊື່ອທີ່ຄົບບໍຣິບູນ ແລະເປັນແບບຢ່າງທີ່ດີ?
3. ຖ້າຫາກທ່ານເຫັນດ້ວຍວ່າ: ຖ້າບໍ່ມີຄວາມເຊື່ອແລ້ວກໍຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້ ( ຮຣ 11:6 ) ທ່ານເດ ? ທ່ານໄດ້ເຮັດສິ່ງໃດທີ່ໃຫ້ເປັນທີ່ພໍພຣະທັຍຂອງພຣະເຈົ້າ? ທ່ານຄິດວ່າພຣະເຈົ້າໄດ້ຊົງພໍພຣະທັຍໃນສິ່ງທີ່ທ່ານເຮັດຢູ່ຫລືບໍ່?

**3. <u>ການອົດທົນດົນນານຂອງຄວາມເຊື່ອ:</u>** ( ເຮັບເຣີ 12:1-2 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ເຮັບເຣີ 12:1-2

2) ໃຫ້ສົນທະນາກັນກ່ຽວກັບຈິດໃຈຂອງນັກແລ່ນແຂ່ງຂັນມີຄວາມສາມາດແລະອົດທົນຢ່າງໃດ?.

**.ຄຳຖາມ:** 1) ສມັຍປະຈຸບັນນີ້ມີໃຜແດ່ທີ່ເປັນພຍານໃຫ້ແກ່ພວກເຮົາ? ເຮົາຈະສາມາດເປັນພຍານ ຕໍ່ອະນາຄົດຂ້າງໜ້າໄດ້ບໍ່?

2). ແມ່ນຫຍັງທີ່ບົ່ງບອກເຖິງຈຸດຈົບຂອງການແຂ່ງຂັນທີ່ພຣະເຈົ້າຊົງຕັ້ງໄວ້ໃຫ້ພວກເຮົາ?

3). ແມ່ນຫຍັງເປັນເປົ້າໝາຍໃນສາຍຕາຂອງເຮົາໃນຂະນະທີ່ເຮົາກຳລັງແລ່ນແຂ່ງຢູ່ໃນຊີວິດຂອງພວກເຮົາ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ເຮັບເຣີ 12:1-2

1. ໃນປະສົບການຂອງທ່ານ ມີຫຍັງທີ່ຖ່ວງດຶງການຫລຸດພົ້ນຈາກບາບຂອງທ່ານທີ່ຍາກທີ່ສຸດ? ທ່ານໄດ້ເບິ່ງ ພຣະເຢຊູຄຣິດຢູ່ບໍ? ເປັນຫຍັງຈຶ່ງຈຳເປັນຕ້ອງເບິ່ງພຣະເຢຊູຄຣິດ?
2. ພຣະເຢຊູຄຣິດເປັນແຫລ່ງກຳເນີດ ແລະເປັນຜູ້ທີ່ດີເລີດຂອງຄວາມເຊື່ອຂອງພວກເຮົາ?
3. ຄວາມທຸກຍາກລຳບາກເຮັດໃຫ້ຄວາມເຊື່ອຂອງທ່ານຈະເຣີນຂຶ້ນຍາກບໍ່?

4). ພຣະເຢຊູຄຣິດເປັນແຫລ່ງກຳເນີດຂອງຄວາມເຊື່ອຂອງເຮົາຢ່າງໃດ?

5). ພຣະເຢູຄຣິດໄດ້ຊ່ອຍທ່ານໃນການແລ່ນແຂ່ງກັບຄວາມທຸກຍາກລຳບາກຢ່າງໃດ?

**<u>ສລູບ</u>:**

1. ໜູນໃຈໃຫ້ນັກຮຽນເລືອກເອົາປໂຍກນຶ່ງຈາກພຣະທັມເຮັບເຣີ 11:5-7,32-38 ທີ່ສະທ້ອນເຖິງຊີວິດໃນຄວາມ ຄວາມເຊື່ອຂອງຕົນ.
2. ໃຫ້ຍຶດຖືເອົາຄວາມຫວັງ ແລະຄວາມຮັກເຂົ້າໃນຊີວິດຂອງທ່ານ ແລ້ວຄວາມເຊື່ອຂອງທ່ານຈະໃຊ້ການໄດ້.

3). ຕິດຕໍ່ກັບນັກຮຽນທາງໂທຣະສັບ, ໄປຢ້ຽມຢາມ, ສົ່ງບັດ ຫລື ອີແມລ ແລະສນັບສນູນດ້ວຍຄວາມເຊື່ອທີ່ໃຊ້ການໄດ້ ຂອງເຮົາພ້ອມທັງແນະນຳການເຂົ້າເຝົ້າພຣະເຈົ້າຮ່ວມກັບຄອບຄົວດ້ວຍ.

4). ຄອບຄົວເປັນທີ່ເຂັ້ມແຂງໃນຄວາມເຊື່ອເຮັດໃຫ້ເປັນທີ່ພໍພຣະທັຍຂອງອົງພຣະຜູ້ເປັນເຈົ້າ.

5). ອະທິຖານປິດການຮຽນ

ລາວຊາວເທີນບັບຕິສສັມພັນ ແປແລະຮຽບຮຽງໂດຍ J.H.

.